ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 2204/ຫສນຍ

ນະຄອນຫຼວງວຽງຈັນ, ວັນທີ 17 - 12 - 2019

# ແຈ້ງການ

ຮຽນ: - ທ່ານ ລັດຖະມົນຕີ ກະຊວງການຕ່າງປະເທດ. ✓

- ທ່ານເຈົ້າແຂວງເຊກອງ.

ເລື່ອງ: ການສະເໜີຂໍຍົກລະດັບດ່ານທ້ອງຖິ່ນ ດາກຕະອອກ (ແຂວງເຊກອງ)-ນາມຢາງ (ແຂວງກວາງນາມ) ຂຶ້ນເປັນດ່ານສາກົນ.

- ອີງຕາມ ໜັງສືສະເໜີ ຂອງກະຊວງການຕ່າງປະເທດ ສະບັບເລກທີ 9380/ຕປທ.ຕຄຊ1, ລົງວັນທີ 27/11/2019.
- ອີງຕາມ ການຊີ້ນຳ ຂອງທ່ານນາຍົກລັດຖະມົນຕີ ລົງວັນທີ 16/12/2019.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງການຊີ້ນຳ ຂອງທ່ານນາຍົກລັດຖະມົນຕີ ມາຍັງທ່ານຊາບວ່າ: " ເຫັນດີໃຫ້ຍົກລະດັບດ່ານທ້ອງຖິ່ນ ດາກຕະອອກ, ແຂວງເຊກອງ ຂຶ້ນເປັນດ່ານສາກົນ ຕາມການສະເໜີ ຂອງກະຊວງການຕ່າງປະເທດ". ມອບໃຫ້ແຂວງເຊກອງ ສົມທົບກັບ ກະຊວງການຕ່າງປະເທດ ດຳເນີນການຕາມລະບຽບທີ່ໄດ້ກຳນົດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ

ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເພັດ ພົມພິພັກ

ບ່ອນນຳສົ່ງ:

| | | |
|---|---|---|
| - ທ່ານ ນາຍົກ, ຮອງນາຍົກລັດຖະມົນຕີ | ທ່ານລະ | 01 ສະບັບ |
| - ຫ້ອງວ່າການສູນກາງພັກ | | 01 ສະບັບ |
| - ຄະນະນຳ ຫສນຍ | ທ່ານລະ | 01 ສະບັບ |
| - ກົມຄົ້ນຄວ້າ-ສັງລວມ | | 01 ສະບັບ |
| - ເກັບມ້ຽນ | | 01 ສະບັບ |